ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----000-----

ກະຊວງການເງິນ

ເລກທີ: 676 /ກງ

ນະຄອນຫຼວງວຽງຈັນ, ວັນທີ: 05 MAR 2013

# ແຈ້ງການ

ເຖິງ: ບັນດາກະຊວງ, ອົງການທຽບເທົ່າ, ບັນດາແຂວງ, ນະຄອນຫຼວງ, ອົງການຈັດຕັ້ງຕ່າງໆ, ບຸກຄົນ, ນິຕິບຸກຄົນ, ບໍລິສັດຂາອອກ-ຂາເຂົ້າ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການໃຫ້ບຸລິມະສິດອັດຕາພາສີນຳເຂົ້າ ສົ່ງອອກ ລາວ-ຫວຽດນາມ ໃນປີ 2013.

- ອີງຕາມ ໜັງສືຈາກກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 0355/ອຄ.ນຄຕ.ສພ, ລົງວັນທີ 28 ມັງກອນ 2013.
- ອີງຕາມ ຂໍ້ຕົກລົງລະຫວ່າງລັດຖະບານ ແຫ່ງ ສປປ ລາວ ແລະ ສສ ຫວຽດນາມ ວ່າດ້ວຍການໃຫ້ບຸລິມະສິດອັດຕາພາສີນຳເຂົ້າ-ສົ່ງອອກ ລາວ-ຫວຽດນາມ ທີ່ລົງນາມໃນວັນທີ 01 ທັນວາ 2011.

ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ຂໍ້ຕົກລົງລະຫວ່າງລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ສສ ຫວຽດນາມ ວ່າດ້ວຍການໃຫ້ບຸລິມະສິດອັດຕາພາສີນຳເຂົ້າ-ສົ່ງອອກ ລາວ-ຫວຽດນາມ ທີ່ລົງນາມໃນວັນທີ 01 ທັນວາ 2011 ແມ່ນໄດ້ຮັບການຕໍ່ອາຍຸອີກໜຶ່ງປີ ໂດຍປະຕິບັດຕາມມາດຕາ 7 ຂອງຂໍ້ຕົກລົງສະບັບດັ່ງກ່າວ ທີ່ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ມັງກອນ 2012 ຮອດ ວັນທີ 31 ທັນວາ 2012, ຊຶ່ງໃນໄລຍະ 90 ວັນ ກ່ອນຂໍ້ຕົກລົງສະບັບດັ່ງກ່າວຈະສິ້ນສຸດການມີຜົນບັງຄັບໃຊ້, ຖ້າບໍ່ມີຄູ່ສັນຍາຝ່າຍໃດຝ່າຍໜຶ່ງສະເໜີເປັນລາຍລັກອັກສອນກ່ຽວກັບການດັດແກ້, ເພີ່ມເຕີມ ຫຼື ຍົກເລີກຂໍ້ຕົກລົງ, ຂໍ້ຕົກລົງດັ່ງກ່າວຈະສືບຕໍ່ນຳໃຊ້ອີກໜຶ່ງປີໂດຍອັດຕະໂນມັດ ແລະ ໃນປີຕໍ່ໆໄປຈະສືບຕໍ່ການຕໍ່ອາຍຸໃນລັກສະນະດຽວກັນນີ້.

ສະນັ້ນ, ກະຊວງການເງິນ ຈຶ່ງອອກແຈ້ງການສະບັບນີ້ມາເພື່ອຊາບ ແລະ ພ້ອມກັນສືບຕໍ່ຈັດຕັ້ງປະຕິບັດ ຊຶ່ງມີຜົນບັງຄັບໃຊ້ແຕ່ວັນທີ 01 ມັງກອນ 2013 ເຖິງ 31 ທັນວາ 2013.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ລັດຖະມົນຕີວ່າການກະຊວງການເງິນ